ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ 101 /ບທວລ
ນະຄອນຫຼວງວຽງຈັນ, ວັນທີ 13 MAY 2025

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;
ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;
ທ່ານ ຜູ້ຖືຮຸ້ນ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມວິສາມັນສະພາບໍລິຫານ ຄັ້ງທີ 2 ປີ 2025

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 15/ສສຄ ລົງວັນທີ 11 ທັນວາ ປີ 2024.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ (ບທວລ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງ ກອງປະຊຸມວິສາມັນສະພາບໍລິຫານ ຄັ້ງທີ 02 ປີ 2025 ເຊິ່ງຈັດຂຶ້ນໃນວັນທີ 13 ພຶດສະພາ 2025 ເວລາ 9:00 ໂມງ, ຢູ່ສຳນັກງານກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

ມາດຕາ 01 : ພິຈາລະນາແລະຮັບຮອງກ່ຽວກັບການປ່ຽນບໍລິສັດກວດສອບຂອງບໍລິສັດຄື :

ເຫັນດີວ່າຈ້າງບໍລິສັດກວດສອບ PWC ເພື່ອຮັບຜິດຊອບວຽກງານການກວດສອບການເງິນປະຈຳປີ 2025 ຂອງບໍລິສັດ, ເຊິ່ງຄ່າບໍລິການຂອງບໍລິສັດກວດສອບແມ່ນຈຳນວນປະມານ 30,000-45.000 ໂດລາ (ລວມ ອາກອນ), ພ້ອມມອບສິດໃຫ້ແກ່ຄະນະອຳນວຍການດຳເນີນການເຊັນສັນຍາກັບບໍລິສັດກວດສອບດັ່ງກ່າວຫຼັງຈາກ ພິຈາລະນາ ແລະ ຮັບ ຮອງຜ່ານກອງປະຊຸມສະພາບໍລິຫານຄັ້ງນີ້ແລ້ວ ຈະສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳ ປີ 2025 ຂອງບໍລິສັດເພື່ອພິຈາລະນາ ແລະ ຮັບຮອງ.

ມາດຕາ 02 : **:** ພິຈາລະນາ ແລະຮັບຮອງສັນຍາຮັບເໝົາໂຄງການກໍ່ສ້າງພະພຸດທະຮູບຢູ່ຈອມພູຜາບິ ກັບກຸ່ມ ບໍລິສັດ ທາງລົດໄຟ ແຂວງຢຸນນານ ຈຳກັດ ແລະບໍລິສັດ ທີ່ປຶກສາວິສະວະກຳ ຊີ້ຈ້າວ ຈຳກັດ ໃນວັນທີ 6/12/2024 ວາລະດັ່ງກ່າວຈະໄປສະເໜີຢູ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ຂອງບໍລິສັດ ເພື່ອພິຈາລະນາ ແລະຮັບຮອງ.

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ.

ປະທານສະພາບໍລິຫານບໍລິສັດ

ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company

ເນ້ຍເຫຼ້ຍ